**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມແຜນການ ແລະ ການເງິນ

ເລກທີ: 16821/ກຜງ
ນະຄອນຫລວງວຽງຈັນ, ວັນທີ: 3 7.2023

## ໜັງສືແຈ້ງເຊີນປະມູນ

**(ພາຍໃຕ້ໂຄງການສ້າງຄວາມເຂັ້ມແຂງດ້ານບຸກຄະລາກອນ ແລະ ນິຕິກໍາ ເພື່ອອໍານວຍຄວາມສະດວກດ້ານການຂົນສົ່ງ, ການຄ້າ ແລະ ການລົງທຶນ ຕາມແລວທາງລົດໄຟ ລາວ-ຈີນ ແລະ ບັນດາເຂດປົ່ນອ້ອມດ່ານຊາຍແດນ)**

ເຖິງ : ບັນດາບໍລິສັດ ທີ່ສົນໃຈເຂົ້າຮ່ວມປະມູນ.

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໄດ້ຮັບທຶນຈາກ ກອງທຶນພິເສດການຮ່ວມມືແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ 2022 ເພື່ອໃຊ້ຈ່າຍສໍາລັບໂຄງການສ້າງຄວາມເຂັ້ມແຂງດ້ານບຸກຄະລາກອນ ແລະ ນິຕິກໍາ ເພື່ອອໍານວຍຄວາມສະດວກດ້ານການຂົນສົ່ງ, ການຄ້າ ແລະ ການລົງທຶນ ຕາມແລວທາງລົດໄຟ ລາວ-ຈີນ ແລະ ບັນດາເຂດປົ່ນອ້ອມດ່ານຊາຍແດນ ແລະ ມີຈຸດປະສົງນໍາໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍໃນການຈັດຊື້ອຸປະກອນຮັບໃຊ້ໂຄງການສ້າງຄວາມເຂັ້ມແຂງດ້ານບຸກຄະລາກອນ ແລະ ນິຕິກໍາ ເພື່ອອໍານວຍຄວາມສະດວກດ້ານການຂົນສົ່ງ, ການຄ້າ ແລະ ການລົງທຶນ ຕາມແລວທາງລົດໄຟ ລາວ-ຈີນ ແລະ ບັນດາເຂດປົ່ນອ້ອມດ່ານຊາຍແດນ, ດ້ວຍການປະມູນເປີດກວ້າງ.
2. ກົມແຜນການ ແລະ ການເງິນ, ກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນສໍາລັບການສະໜອງ ອຸປະກອນຮັບໃຊ້ໂຄງການດັ່ງລາຍລະອຽດລຸ່ມນີ້:

| ລໍາດັບ | ລາຍການ | ຈໍານວນ | ຫົວໜ່ວຍ |
|---|---|---|---|
| 1 | Tablet | 3 | Unit |
| 2 | Laptop Computer (MPWT) | 3 | Unit |
| 3 | Desktop Computer (DPWT) | 19 | Unit |
| 4 | Laptop Computer (DPWT) | 2 | Unit |
| 5 | Black and White Printer | 14 | Unit |
| 6 | Cameras | 13 | Unit |
| 7 | External | 13 | Unit |
| 8 | Scanner | 2 | Unit |
| 1 | Office Desk | 1 | Set |
| 2 | Office Chair | 17 | Unit |
| 3 | Tripod Screen | 1 | Set |

| | | | |
|---|---|---|---|
| 4 | Speaker Bluetooth | 1 | Set |
| 5 | Video and Audio-Conferencing System+ Mini Desktop Control System+ Monitor / Screen size+ Monitor handling | 1 | Set |

- ໄລຍະການຈັດສົ່ງແມ່ນພາຍໃນ 30 ວັນ ຫຼັງຈາກເຊັນສັນຍາ.

3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ບໍລິສັດທີ່ມີຄວາມສົນໃຈການປະມູນ ສາມາດຕິດຕໍ່ພົວພັນໄດ້ທີ່ ພະແນກຮ່ວມມື ແລະ ຄຸ້ມຄອງການລົງທຶນ ກົມແຜນການ ແລະ ການເງິນ, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ຖະໜົນລ້ານຊ້າງ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

   ເບີໂທ: +856-20 **998-553-89**; +856-20 **555-345-51**. Email: maxmahaxay11@hotmail.com.

   CC: dilaphanhnana@yahoo.com; visara.khamvongsa@gmail.com
5. ເອກະສານຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນໜັງສືສະເໜີຫາ ກົມແຜນການ ແລະ ການເງິນ ເລີ່ມແຕ່ວັນທີ 05 ກໍລະກົດ 2023 ເປັນຕົ້ນໄປ, ໃນລາຄາ 1.000.000 ກີບ (ໜຶ່ງລ້ານກີບ) ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີຊຳລະຕ້ອງຈ່າຍເປັນເງິນສົດ ຫຼື ເງິນໂອນ.
6. ຊອງປະມູນຕ້ອງສົ່ງທີ່ ກົມແຜນການ ແລະ ການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ອນເວລາ 14:00 ໂມງ ຂອງວັນທີ 04 ສິງຫາ 2023, ຊອງປະມູນທີ່ສົ່ງມາທາງເອເລັກໂຕນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ ເລີ່ມແຕ່ 14:00 ໂມງ ຂອງວັນທີ 04 ສິງຫາ 2023 ທີ່ຫ້ອງປະຊຸມ ກົມແຜນການ ແລະ ການເງິນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດທີ່ມີຄວາມສົນໃຈເຂົ້າຮ່ວມປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມແຜນການ ແລະ ການເງິນ

**ວັນ ດີລະພັນ**